# ບົດຂ່າວ

## ພິທີເຊັນສັນຍາການຮ່ວມມືລະຫວ່າງ ທຄຕລ ແລະ ບໍລິສັດ ໄທເອັສ ເຊົ່າສິນເຊື່ອ (ລາວ) ຈຳກັດ ວ່າດ້ວຍ ການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ.




ໃນວັນທີ 10 ກໍລະກົດ 2017 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ບໍລິສັດ ໄທເອັສ ເຊົ່າສິນເຊື່ອ (ລາວ) ຈຳກັດ ໄດ້ຈັດພິທີເຊັນສັນຍາການຮ່ວມມື ວ່າດ້ວຍ ການຊຳລະສະສາງຄ່າບໍລິການຕ່າງໆຜ່ານ ທຄຕລ.

ການລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ: ທ່ານ ພັນຊະນະ ຄູນນຸວົງ, ຮອງຜູ້ອຳນວຍການ, ທຄຕລ ແລະ ທ່ານ ໄກວິດ ເຕຊະວິດທະຍະປະກອນ, ຜູ້ອຳນວຍການບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ.

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:

ຄະນະອຳນວຍການ ທຄຕລ, ຄະນະຜູ້ແທນຈາກ ບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ, ຄະນະພະແນກ, ຄະນະສູນ, ຄະນະສາຂາ ຂອງ ທຄຕລ ແລະ ຕະຫລອດຮອດພະນັກງານຂອງທັງຝ່າຍ.

ສັນຍາວ່າດ້ວຍການຮ່ວມມືການຊຳລະຄ່າບໍລິການຕ່າງໆຜ່ານ ທຄຕລ ລະຫວ່າງ ທຄຕລ ແລະ ບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ ແມ່ນເພື່ອອຳນວຍຄວາມສະດວກດ້ານການຊຳລະຄ່າງວດເຊົ່າສິນເຊື່ອຂອງບັນດາລູກຄ້າ ບໍລິສັດ ໄທເອັສ ເຊົ່າສິນເຊື່ອ (ລາວ) ຈຳກັດ ຜ່ານ ທຄຕລ, ເຊິ່ງໃນເບື້ອງຕົ້ນແມ່ນສາມາດຊຳລະຜ່ານເຄົາເຕີ້ (Counter) ຈຸດບໍລິການແມ່ນ: ສຳນັກງານໃຫຍ່ ທຄຕລ, ບັນດາສາຂາ ແລະ ໜ່ວຍບໍລິການທົ່ວລະບົບ ທຄຕລ, ຜ່ານມືຖືດ້ວຍ

BCEL One ແລະ ອິນເຕີເນັດແບງຄິງ BCEL I-Bank. ໃນອະນາຄົດ ທຄຕລ ຈະມີການພັດທະນາໃຫ້ສາມາດ ຊຳລະຜ່ານຕູ້ ATM ແລະ SMS Banking.




ທ່ານ ພັນຊະນະ ຄູນນຸວົງ, ຮອງຜູ້ອຳນວຍການ, ທຄຕລ ໄດ້ກ່າວວ່າ: ໃນນາມທີ່ ທຄຕລ ເປັນທະນາຄານທຸລະກິດ ໃນແຖວໜ້າ ຂອງ ສ.ປ.ປ ລາວ, ທະນາຄານແມ່ນມີຄວາມພ້ອມຫລາຍດ້ານໃນການໃຫ້ບໍລິການ ແກ່ລູກຄ້າທຸກທ່ານ ລວມທັງລູກຄ້າຂອງທາງບໍລິສັດໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ. ປະຈຸບັນ, ທຄຕລ ມີ 19 ສາຂາ, 82 ໜ່ວຍບໍລິການ, 15 ຫ້ອງແລກປ່ຽນ, ມີຕູ້ ATM 344 ເຄື່ອງທົ່ວປະເທດ, ທະນາຄານມີການນຳໃຊ້ເຕັກໂນໂລ ຍີທີ່ທັນສະໄໝເຂົ້າ ໃນການບໍລິການ ໃຫ້ມີຄວາມທັນສະໄໝ, ອິນເຕີເນັດແບງຄິງ ຄື: BCEL One ແລະ BCEL i-Bank ເພື່ອອຳນວຍຄວາມສະດວກໃນການຊຳລະສາງ ແລະ ການເຮັດທຸລະກຳການເງິນຕ່າງໆໂດຍ ລູກຄ້າໄດ້ເອງ ບໍ່ຈຳເປັນຕ້ອງເຂົ້າມາທະນາຄານ. ທຄຕລ ຂໍສະແດງຄວາມຂອບໃຈມາຍັງ ບໍລິສັດ ໄທເອັສ ເຊົ່າສິນເຊື່ອ (ລາວ) ຈຳກັດ ທີ່ໄດ້ໃຫ້ຄວາມເຊື່ອໝັ້ນ ແລະ ເລືອກໃຊ້ບໍລິການຂອງ ທຄຕລ. ທຄຕລ ສັນຍາວ່າຈະໃຫ້ບໍລິການຢ່າງດີ ທີ່ສຸດ.

ທ່ານ ໄກວິດ ເຕຊະວິດທະຍະປະກອນ, ຜູ້ອຳນວຍການບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ ໄດ້ກ່າວວ່າ: ບໍລິສັດ ໄທເອສ ເຊົ່າສິນເຊື່ອ (ລາວ) ຈຳກັດ ໄດ້ເປີດໃຫ້ບໍລິການດ້ານເຊົ່າສິນຊື້ອຢ່າງເປັນທາງການຕັ້ງແຕ່ວັນທີ 19 ພະຈິກ 2015 ທີ່ຜ່ານມາ. ບໍລິສັດມີຜະລິດຕະພັນບໍລິການແກ່ພໍ່ແມ່ປະຊາຊົນ ໃນຂອບເຂດນະຄອນຫຼວງວຽງຈັນ ເຊັ່ນ: ສິນເຊື່ອສຳລັບ ລົດໃຫຍ່, ລົດຈັກ, ມືຖື ແລະ ເຄື່ອງໃຊ້ໄຟຟ້າ. ປະຈຸບັນ ລູກຄ້າຂອງບໍລິສັດນັບມື້ນັບເພີ່ມຂຶ້ນ. ສະນັ້ນ, ບໍລິສັດຈຶ່ງໄດ້ ຮ່ວມມືກັບ ທຄຕລ ເພື່ອເພີ່ມຄວາມຫລາກຫລາຍ ໃຫ້ລູກຄ້າໃນການເລືອກ ຊຳລະຄ່າງວດ ເຊົ່າສິນເຊື່ອຜ່ານລະບົບ ທະນາຄານຂອງ ທຄຕລ. ທ່ານເຊື່ອວ່າ, ການຊຳລະສະສາງທີ່ສະດວກສະບາຍ ກໍ່ເປັນອີກເຫດ ຜົນໜຶ່ງທີ່ສຳຄັນໃນ ການຕັດສິນໃຈເລືອກໃຊ້ບໍລິການເຊົ່າສິນເຊື່ອຂອງລູກຄ້າດ້ວຍ ແລະ ບໍລິສັດເຊື່ອວ່າ ການຮ່ວມມືກັບ ທຄຕລ ຈະຊ່ວຍ ໃຫ້ລູກຄ້າຫັນມາໃຊ້ບໍລິການຂອງບໍລິສັດຫລາຍຂຶ້ນ. ທ່ານ ໄກວິດ ຍັງໄດ້ກ່າວຂອບໃຈ ຕໍ່ ທຄຕລ ທີ່ໃຫ້ຄວາມຮ່ວມມືເພື່ອ

ໃຫ້ບໍລິການແກ່ລູກຄ້າຂອງບໍລິສັດ, ທາງບໍລິສັດເອງກໍ່ຈະຊຸກຍູ້ໃຫ້ລູກຄ້າຂອງ ບໍລິສັດຊໍາລະ ຄ່າງວດຜ່ານທາງ ທຄຕລ ໃຫ້ຫລາຍຂຶ້ນ.